PetroTrade
ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ເລກທີ : 087/ປທລ/2019

ນະຄອນຫຼວງວຽງຈັນ, ວັນທີ 27 ສິງຫາ 2019

ຮຽນ: ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ
ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນ ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 2/2019

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 007/ຄຄຊ, ລົງວັນທີ 03/4/2014.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 22/ຕລຊລ, ລົງວັນທີ 07/1/2011.

ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ("ບໍລິສັດ" ຫຼື "ປທລ") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 2/2019 ວັນທີ 27 ສິງຫາ 2019 ດັ່ງລາຍລະອຽດລຸ່ມນີ້:

ວາລະທີ 1: ຮັບຮອງເອົາ ບົດບັນທຶກກອງປະຊຸມສະພາບໍລິຫານ ຄັ້ງທີ່ 1/2019, ເມື່ອວັນທີ 12 ມີນາ 2019;

ວາລະທີ 2: ຮັບຮອງເອົາ ເອກະສານລາຍງານການເງິນ 6 ເດືອນຕົ້ນປີ 2019 ທີ່ຜ່ານການກວດສອບຂອງ ຜູ້ກວດສອບພາຍນອກ ແລະ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳ 6 ເດືອນຕົ້ນປີ 2019;

ວາລະທີ 3: ຕົກລົງເຫັນດີ ແລະ ຮັບຮອງເອົາການປັບປ່ຽນແຜນການຂາຍປະຈຳປີ 2019 ຈາກ 243ລ້ານລິດ ມາເປັນ 200ລ້ານລິດ ອັນເນື່ອງມາຈາກປັດໃຈທາງດ້ານການເຕີບໂຕຂອງຕະຫຼາດນ້ຳມັນພາຍໃນປະເທດບໍ່ເປັນໄປຕາມການຄາດການ ແລະ ກົດລະບຽບການໃໝ່ກ່ຽວກັບທຸລະກິດນ້ຳມັນຈາກທາງລັດຍັງບໍ່ໄດ້ຮັບການປະຕິບັດຢ່າງເຕັມສ່ວນ.

ຈຶ່ງແຈ້ງມາເພື່ອຊາບ.

ດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ
ປະທານສະພາບໍລິຫານ

ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ຈັນທອນ ສິດທິໄຊ